ແລະແຜນລາຍຈ່າຍຕົວຈິງທີ່ຈະປະຕິບັດຢູ່ທ້ອງຖິ່ນ ແລ້ວຈຶ່ງເອົາເຂົ້າໃນແຜນລາຍຈ່າຍຂອງທ້ອງຖິ່ນ. ແຕ່ໃນກໍລະນີບໍ່ສາມາດໄຈ້ແຍກໄດ້ແມ່ນໃຫ້ເອົາເຂົ້າໃນບັນຊີລາຍຈ່າຍຂອງກະຊວງຂະແໜງ ການ;

<u>ໝາຍເຫດ</u>:

- ສໍາລັບແຜນງານ ແລະ ໂຄງການ ຊ.ກ.ພ ທີ່ມີທຶນສົມທົບ ພາຍຫຼັງທີ່ ກົມຮ່ວມມືສາກົນ ໄດ້ມີການກວດກາ ແລະ ຢັ້ງຢືນຄວາມຖືກຕ້ອງແລ້ວຈະໄດ້ສົ່ງໃຫ້ ກົມປະເມີນຜົນ ແລະກົມແຜນການ ກະຊວງແຜນການ ແລະການລົງທຶນ ດໍາເນີນການປະເມີນ ແລະເອົາເຂົ້າແຜນ ເພື່ອລາຍງານໃຫ້ລັດຖະບານອະນຸມັດ ແລະ ສະພາແຫ່ງຊາດຮັບຮອງຢ່າງເປັນທາງການ;
- ຖ້າຫາກວ່າກະຊວງຂະແໜງການ ຫຼື ທ້ອງຖິ່ນ ໃດທີ່ບໍ່ສາມາດສະຫຼຸບສັງລວມແຜນທຶນສົມທົບ ສໍາລັບແຜນງານ ແລະໂຄງການ ຊ.ກ.ພ ສົ່ງໃຫ້ ກະຊວງແຜນການ ແລະການລົງທຶນ (ກົມຮ່ວມມືສາກົນ) ໄດ້ຕາມກໍານົດເວລາ ທີ່ໄດ້ລະບຸໄວ້ໃນແຈ້ງການສະບັບນີ້ ແມ່ນຈະໄດ້ພິຈາລະນາເອົາເຂົ້າແຜນຂອງປີຕໍ່ໄປ.

ດັ່ງນັ້ນ, ຈຶ່ງແຈ້ງມາຍັງທ່ານ ເພື່ອຊາບ ແລະ ຊີ້ນໍາການຈັດຕັ້ງປະຕິບັດຕາມທາງຄວນດ້ວຍ.

**ລັດຖະມົນຕີ**

ກະຊວງແຜນການແລະການລົງທຶນ

ລັດຖະມົນຕີ

**ດຣ. ສຸພັນ ແກ້ວມີໄຊ**

**<u>ເອກະສານຄັດຕິດ</u>**

1. ແບບຟອມແຜນການລົງທຶນຂອງລັດ ປີ 2018 ສໍາລັບທຶນ ຊ.ກ.ພ ຂອງກະຊວງຂະແໜງການ ແລະທ້ອງຖິ່ນ
2. ຄູ່ມືການແນະນໍາການໃສ່ລະຫັດ PIP ແລະ ODA

**<u>ຕິດຕໍ່/ປະສານງານ</u>**
ກົມຮ່ວມມືສາກົນ 021 214062; aed.dic@gmail.com

**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ**

**ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ**

ກະຊວງແຜນການ ແລະການລົງທຶນ

ເລກທີ ----1161 /ຜທ.ຂມສ

ນະຄອນຫຼວງວຽງຈັນ, ວັນທີ...0.8..JUN.2017......

# ແຈ້ງການ

**ຮຽນ: - ທ່ານ ຮອງນາຍົກລັດຖະມົນຕີ, ລັດຖະມົນຕີ ກະຊວງການເງິນ ທີ່ນັບຖືຢ່າງສູງ,**

**- ບັນດາທ່ານລັດຖະມົນຕີ, ທ່ານເຈົ້າຄອງ ແລະ ບັນດາທ່ານເຈົ້າແຂວງ ທີ່ນັບຖື,**

**ເລື່ອງ:** ການສະຫຼຸບສັງລວມແຜນປະຈຳປີ ຂອງ ບັນດາແຜນງານ ແລະ ໂຄງການ ຊ່ວຍເຫຼືອທາງການເພື່ອການພັດທະນາ ປະຈຳປີ 2018

- ອີງຕາມ ດຳລັດຂອງນາຍົກລັດຖະມົນຕີ ເລກທີ 374/ນຍ, ລົງວັນທີ 22 ຕຸລາ 2007 ວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວ ຂອງກະຊວງແຜນການ ແລະການລົງທຶນ.
- ອີງຕາມ ດຳລັດຂອງນາຍົກລັດຖະມົນຕີ ເລກທີ 75/ນຍ, ລົງວັນທີ 20 ມີນາ 2009 ວ່າດ້ວຍການຄຸ້ມຄອງ ແລະ ນຳໃຊ້ການຊ່ວຍເຫຼືອທາງການ ເພື່ອການພັດທະນາ.
- ອີງຕາມການສະຫຼຸບສັງລວມແຜນປະຈຳປີ ຂອງ ບັນດາແຜນງານ ແລະ ໂຄງການ ຊ່ວຍເຫຼືອທາງການເພື່ອການພັດທະນາ ປະຈຳປີ 2018

ກະຊວງແຜນການ ແລະ ການລົງທຶນ ຂໍຖືເປັນກຽດຢ່າງສູງແຈ້ງມາຍັງທ່ານ ຊາບວ່າ: ເພື່ອເຮັດໃຫ້ການຈັດຕັ້ງປະຕິບັດການລາຍງານ ແລະສັງລວມແຜນລາຍຈ່າຍໂຄງການຊ່ວຍເຫຼືອທາງການເພື່ອການພັດທະນາ ປະຈຳປີ 2018 ມີຄວາມເປັນເອກະພາບ ແລະ ຖືກຕ້ອງຕາມຂໍ້ມູນຕົວຈິງ. ຈຶ່ງສະເໜີມາຍັງທ່ານປະຕິບັດດັ່ງນີ້:

1. ໃຫ້ກະຊວງຂະແໜງການ, ນະຄອນຫຼວງ ແລະບັນດາແຂວງ ສະຫຼຸບສັງລວມບັນດາໂຄງການ ຊ.ກ.ພ ໃໝ່ ທີ່ ມີທຶນສົມທົບ ແຕ່ຍັງບໍ່ໄດ້ເອົາເຂົ້າແຜນໃນສົກປີຜ່ານມາ ແລະໂຄງການສືບຕໍ່ທີ່ມີທຶນສົມທົບ ພ້ອມເອກະສານຄັດຕິດຢ່າງຄົບຖ້ວນ ແລ້ວສົ່ງໃຫ້ ກົມຮ່ວມມືສາກົນ, ກະຊວງກະຊວງແຜນການ ແລະການລົງທຶນ ຕາມກຳນົດ ຊ້າສຸດບໍ່ໃຫ້ກາຍວັນທີ 15 ເດືອນ ມິຖຸນາ (6) 2017 ເພື່ອໃຫ້ສາມາດສັງລວມເຂົ້າບັນຊີ ແລະຢັ້ງຢືນຄວາມຖືກຕ້ອງຕາມເອກະສານທີ່ໄດ້ຕົກລົງເຫັນດີ ແລະເຊັນກັບຄູ່ຮ່ວມພັດທະນາຢ່າງເປັນທາງການແລ້ວ.
2. ໃຫ້ກະຊວງຂະແໜງການ, ນະຄອນຫຼວງ ແລະ ບັນດາແຂວງ ຈັດກ່າຍເອົາແຜນລາຍຈ່າຍຂອງໂຄງການຊ່ວຍເຫຼືອທາງການເພື່ອການພັດທະນາ ທີ່ ບໍ່ມີທຶນສົມທົບ ແລະມີແຜນລົງທຶນຕົວຈິງໃນປີ 2018 ເຂົ້າໃນແຜນລາຍຈ່າຍປະຈຳປີ 2018 ໃຫ້ຄົບຖ້ວນ ແລ້ວສົ່ງໃຫ້ ກົມຮ່ວມມືສາກົນ, ກະຊວງແຜນການ ແລະການລົງທຶນ ຕາມກຳນົດຊ້າສຸດບໍ່ໃຫ້ກາຍວັນທີ 15 ເດືອນ ກໍລະກົດ (7) 2017 ເພື່ອໃຫ້ສາມາດສັງລວມເຂົ້າບັນຊີ ເພື່ອລາຍງານໃຫ້ລັດຖະບານອະນຸມັດ ແລະ ສະພາແຫ່ງຊາດ ຮັບຮອງຢ່າງເປັນທາງການ.
3. ກະຊວງຂະແໜງການ, ບັນດາແຂວງ ແລະນະຄອນຫຼວງຕ້ອງນຳໃຊ້ ແລະ ສະໜອງຂໍ້ມູນຕາມແບບຟອມສະເພາະທີ່ ກະຊວງແຜນການ ແລະການລົງທຶນ ໄດ້ກຳນົດໄວ້ ໂດຍສະເພາະແມ່ນໂຄງການ ຊ.ກ.ພ ແມ່ນຕ້ອງໄດ້ລະບຸຂໍ້ມູນລະອຽດເຊັ່ນ: ອີງການຜູ້ໃຫ້ທຶນ ແລະເປົ້າໝາຍການພັດທະນາແບບຍືນຍົງ (SDGs) ທີ່ ໂຄງການດັ່ງກ່າວໄປສະໜັບສະໜູນ ໃນຂົງເຂດວຽກງານທີ່ຂະແໜງການຮັບຜິດຊອບ.
4. ສຳລັບໂຄງການຊ່ວຍເຫຼືອທາງການເພື່ອການພັດທະນາ ທີ່ເປັນປະເພດເງິນກູ້ຢືມ (ໃນເງື່ອນໄຂຜ່ອນຜັນ) ແມ່ນໃຫ້ປະສານກັບກະຊວງຂະແໜງການທີ່ກ່ຽວຂ້ອງ ແລະກະຊວງການເງິນ ເພື່ອໄຈ້ແຍກໃຫ້ໄດ້ມູນຄ່າໂຄງການ